ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂໍ້ມູນ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ, ຫ້ອງການ ທຫລ
ໂທ/ແຟັກ 856 21 213109, 213110

# ປົດຂ່າວ

## ຜູ້ວ່າການທະນາຄານແຫ່ງ ສປປ ລາວ ພ້ອມດ້ວຍຄະນະ ອວຍພອນເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມປະຈຳ ສປປ ລາວ ເນື່ອງໃນໂອກາດວັນຊາດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 78 ປີ



ໃນຕອນບ່າຍຂອງວັນທີ 31 ສິງຫາ 2023 ນີ້. ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕາງໜ້າໃຫ້ຄະນະນຳ ແລະ ພະນັກງານທະນາຄານແຫ່ງ ສປປ ລາວ ໄດ້ນຳພາຄະນະ ອວຍພອນ ທ່ານ ຫງວຽນ ບ໋າຮຸ່ງ ເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມປະຈຳ ສປປ ລາວ ເນື່ອງໃນໂອກາດວັນຊາດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 78 ປີ (02/09/1945-02/09/2023) ທີ່ສະຖານເອກອັກຄະລັດຖະທູດ ແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ.



ໃນໂອກາດນີ້ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ໄດ້ຕາງໜ້າໃຫ້ຄະນະນຳ ແລະ ພະນັກງານທະນາຄານແຫ່ງ ສປປ ລາວ ສະແດງຄວາມຊົມເຊີຍ ເນື່ອງໃນໂອກາດວັນຊາດ ສາທາລະນະລັດ ສັງຄົມນິຍົມ ຫວຽດນາມ ຄົບຮອບ 78 ປີ ມາຍັງ ທ່ານ ເອກອັກຄະລັດຖະທູດ ວິສາມັນຜູ້ມີອຳນາດເຕັມ ແຫ່ງ ສສ ຫວຽດນາມປະຈຳ ສປປ ລາວ ພ້ອມດ້ວຍ ພະນັກງານສະຖານທູດທຸກສະຫາຍ ແລະ ຜ່ານທ່ານ ເອກອັກຄະລັດຖະທູດ ໄປຍັງຄະນະນຳ ພັກ-ລັດ ຂອງ ສສ ຫວຽດນາມ ເຊິ່ງຕະຫຼອດໄລຍະ 78 ປີ ແຫ່ງການສ້າງຕັ້ງ ສສ ຫວຽດນາມ ທີ່ສາມາດຍາດໄດ້ຜົນສຳເລັດອັນໃຫຍ່ຫຼວງໃນຫຼາຍດ້ານ. ພ້ອມທັງໄດ້ສະແດງຄວາມຊົມເຊີຍຕໍ່ການຮ່ວມມືໃນການປະສານງານແລກປ່ຽນ ແລະ ອຳນວຍຄວາມສະດວກໃນໄລຍະຜ່ານມາ ເຊິ່ງໄດ້ຮັບຜົນສຳເລັດຢ່າງຈົບງາມໃນການປະກອບສ່ວນເຂົ້າໃນການເສີມຂະຫຍາຍສາຍພົວພັນມິດຕະພາບ, ຄວາມສາມັກຄີ ແລະ ການຮ່ວມມື.



ໃນໂອກາດດຽວກັນນີ້, ທ່ານ ເອກອັກຄະລັດຖະທູດ ຫງວຽນ ບ໋າຮຸ່ງ ກໍ່ໄດ້ສະແດງຄວາມຂອບໃຈຕໍ່ຄຳອວຍພອນອັນປະເສີດ ແລະ ຄຳຊົມເຊີຍ ຈາກ ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ ແລະ ຄະນະຈາກທະນາຄານແຫ່ງ ສປປ ລາວ ທີ່ມາອວຍພອນໃນຄັ້ງນີ້ ພ້ອມທັງສະແດງຄວາມເຊື່ອໝັ້ນວ່າ ສະຖານເອກອັກຄະລັດຖະທູດແຫ່ງ ສສ ຫວຽດນາມ ປະຈຳ ສປປ ລາວ ຈະສືບຕໍ່ຮັກສາມູນເຊື້ອການພົວພັນອັນສະໜິດແໜ້ນ ກັບທະນາຄານແຫ່ງ ສປປ ລາວ ເພື່ອເສີມຂະຫຍາຍສາຍພົວພັນມິດຕະພາບອັນຍິ່ງໃຫຍ່ໃນການປະສານງານແລກປ່ຽນ ແລະ ການຮ່ວມມືໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງສຸດ.

ຂ່າວ-ພາບ ຈາກ: ສອນໄຊ ສີຫາເທບ ຫ້ອງການທະນາຄານແຫ່ງ ສປປ ລາວ

ຢູ່ເມືອງລາວໃຊ້ເງິນກີບລາວ